# ຄິດຮອດແຟນແລ່ນປະຫັບ

(ຢ່າລືມຕົວສະກົດເດີ້)

ວັນເວລາກະຊິດຈີ້ ຈວນມື່ວັນຈັດງານ
ນາງຂັນເງິນຄົນຈັດການ ເຮັ່ງຮີບຮົນໃຈຮ້ອນ
ໃຈອາວອນຢ້ານຂາຍໜ້າ ຈັດຕຽມຫາມ້ຽນມັດບ່ອນ
ຫຼາຍຄົນບິນມາກ່ອນ ສອງສາມວັນລ່ວງໜ້າ ຫວັງມາຊວ້ານຊ່ວຍແຮງ ກະໄຄທ້ອນ

ເອື້ອຍຮິ່ມມີນ້ຳໃຈບໍ່ເຫືອດແຫ້ງ ບິນມາກ່ອນ ຕັ້ງຫົກວັນ
ເພາະເພິ່ນຄົນຈັດການ ດ້ານອາຫານ ໃຫ້ພຽງພ້ອມ
ບໍ່ແມ່ນແນວຄົນຍ້ອມ ແນວຂາຍຄືເຂົ້າຊ່າ
ໃຫ້ທົ່ວເຖິງອິ່ມທົ່ວໜ້າ ພຽງພໍພ້ອມທຸກສິ່ງອັນ

ສ່ວນອີກທາງໜຶ່ງໄດ້ ອາຈານໃຫຍ່ອຳນວຍການ
ເກຕຕະວົງຂຶ້ນຍົນເຫາະ ເກາະຕ່ອງກົມກຽວໝັ້ນ
ສາມສີ່ວັນປະມານໄດ້ ທອງສອງເຊືອໄດ້ດັ້ນດ່ວນ
ຊວ້ານຊ່ວຍແຮງຮອບດ້ານ ຈັດການໄດ້ຄູ່ສູ່ແນວ

ຍັງຄະນຶງຢູ່ບໍ່ແລ້ວ ນຳນາງນາດມະນີແວງ
ເມົາແຕ່ແຍງຄຶງຕົນ ຈົນວ່າລືມໄລຊິ້ນ
ບິນຈາກວຽງຈັນກວ້າງ ເມືອງຫຼວງລາວດັ້ນຮອດ
ຈອດແລ້ວລືມຫີບຫໍ່ຜ້າ ຈັກປະງ້ວງເຮັ່ຽຢູ່ໃສ

ສ່ວນອີກທາງໜຶ່ງໄດ້ ຫຼືງຫີບຫໍ່ໃຫ້ຊວນຫົວ
ມົວຄິດນຳສອງຊາຍ ຜູ້ໝ່າຍນຳຄຶງນ້ອງ
ເພາະທັງສອງຂັດຂ້ອງ ບໍ່ຍອມບິນມາຮ່ວມ

ເຮັດໃຫ້ນາງເຫງົາງ່ວມ    ປະໃຫ້ທີບກ່ຳພ້າ    ໄຫຼ້ງວງຢູ່ລາງ

ນາງໄຄ່ຄິດໂກດແຄ້ນ    ວ່າຄົນອື່ນເຂົາເອົາຜິດ
ຄິດວ່າຕົນຄົງຊວຍ    ຫຼັ່ງນ້ຳຕາພາງຮ້າຍ
ຫ່ວງສິ້ນໃຫມຜືນໂກ້    ຣາຄາແພງບໍ່ໄດ້ນຸ່ງ    ແລ້ວນໍ
ຝູງຫມູ່ເອື້ອຍຜູ້ຮັບຕ້ອນ    ສະອອນໂອ້ອ່າວຫາ

ຈາກນັ້ນ  ດົນສົມຄວນທີ່ຢູ່ຖ້າ    ພາກັນເລາະຫາເອົາ
ເຂົ້າໄປເຖິງບ່ອນລາງຫມຸນ    ທີບເຄື່ອງຂອງກໍເລີຍພໍ້
ນວນລະອໍເຮັງຮ້ອນ    ສີພັນດອນເບິ່ງຊົງຄຽດ
ທັງຊຽດແດມ  ດ່າກ້ອງ    ທີບຂອງນ້ອງຊ້ຳບໍ່ເຫັນ    ເອື້ອຍເອີຍ

ຫຼືວ່າເພິ່ນຕັ້ງເສັ້ນ    ທີບຮອບເວິ່ນມາກາຍ
ບາຍເບິ່ງຫຼາຍສິບທີ    ພັດຊຸກຫນີ  ຍ້ອນຄວາມດີ້
ທີບນ້ອງຄືແນວນີ້    ທັງສີສັນແລະຂນາດ
ແຕ່ປລາດໃຈບໍ່ແລ້ວ    ຂອງນ້ອງພັດບໍ່ມາ    ອຸກເດ

ເທີງສົມຄວນແຕ່ນ້ອງຖ້າ    ຈົນອິດອ່ອນເພັ່ງໃຈ
ເຫັນຈຳນວນຫຼວງຫຼາຍ    ແຕ່ບໍ່ມີຂອງນ້ອງ
ເອື້ອຍຣິ່ມ    ລອງຈັບຍໍມັນຂຶ້ນ    ມາແລດູຈັກວ່າແມ່ນ
ຍ້ອນເພິ່ນຄິດນຳແຟນ    ທີບໂຕເອງແທ້ໆ    ຍັງໂຍນຖິ້ມຊຸກຫນີ

ຕອນເອື້ອຍຣິ່ມບອກຊີ້    ເພິ່ນທຳທ່າສຽງແຂງ
ຈັບແຍງກັນກັບຕິດເກັດ    ເລກໂຕດຽວທັງນັ້ນ
ຫົວຂວັນກັນຈົນງໍດິ້ນ    ຍິນລາງຄົນຈົນຍ່ຽວເຮັ່ງ
ເສັຽຄວາມໂງ່ຍ້ອນຫ່ວງຊູ້    ທັງສອງເສັ້ນຊ່າງບໍ່ມາ

ໃຈຫນຶ່ງຢາກເຫັນຫນ້າ ຊູ້ເກົ່າເຄີຍຫວງແຫນ
ແຕ່ເນັ້ນຫນັກໄປທາງແຟນ ຈຶ່ງແລ່ນຮົນຫາເອີ້ນ
ເອື້ອຍຂັນເງິນຫົວຂວັນເຢີ້ຍ ຄິດນຳແຟນແລ່ນປະທິບ
ມັນຕົບຕັນໃຈບໍ່ຫ້າວ ນັດສາວໄວ້ອ້າຍບໍ່ມາ

ສັງມາ ປະໃຫ້ນາງຄອຍຖ້າ ຄິດຕັ້ງຕໍ່ສອງອວນຊາຍ
ອ້າຍບໍ່ຫມາຍມາດອມ ປ່ອຍໃຫ້ດອນຄອຍເກົ້
ເຜີໃຈນາງໄດ້ຄອຍຖ້າ ການາດາ ສັງປະປ່ອຍ
ໂຕຮົນໂຮ ກໍມິດຈ້ອຍ ມົງເຕຣອານກໍມິດຈ້ອຍ ນ້ອງຄອຍເກົ້ງວກແນມ

ຫຼືວ່າ ຜົມຂາວແຊມຫົວອ້າຍ ຄນິງຮ່ຳທາງອາຍ ຊັ້ນບໍ?
ຫຼືຊາຍມົວແຕ່ກັງວົນ ຍ້ອນຄ່າຍົນຄືນບ້ານ
ຫຼືວ່າອາຍຫົວລ້ານ ຜົມເຊົາໃກຄ້ົວຢູ່ຕ່ຳ
ບໍ່ຫ່ວງນຳຫມ່ອມນ້ອງ ຜູ້ຄອຍອ້າຍຊິຫມ່າຍມາ

ເອົາລະ ລໍຟັງກອນອີກເທື່ອຫນ້າ ຊິມາວ່າໃຫ້ຈຸໃຈ
ຍ້ອນຄົນມີຈັງໄຮ ຈຶ່ງຂີດຂຽນຕາມຄວາມດົ້
ແນວເປັນສິດອາຈານຕົ້ ໃຫ້ສົມຄືເປັນສິດເອກ
ເລກຄນິດບໍ່ຍ່ອນຍ້ານ ຍັງຫານສູ້ໄດ້ດັ່ງດຽວ

ຫົວຊາຫຼັງແຕ່ກອນກ້ຽວ ຫຼືກອນຍອກແຊວສາວ
ບໍ່ສຳຫາວຂຽນມາເລີຍ ບໍ່ຢູ່ເສີຍສົມທ້າ
ສິພັນດອນຜົມມ້າ ຢ່ານອນເສີຍໃຫ້ຂຽນຕໍ່
ຂໍໂຈະກອນກ່າວຂໍ້ ຊິລໍເຈົ້າຕອບສເລີຍ.....